**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ແຂວງອຸດົມໄຊ

ພະແນກສາທາລະນະສຸກແຂວງ

ເລກທີ 1337/ສທຂ

ລົງວັນທີ; 26 ສິງຫາ 2024

# ແຈ້ງການແນະນຳ

**ເຖິງ ທ່ານ ຫົວໜ້າຫ້ອງການສາທາລະນະສຸກ, ອຳນວຍການໂຮງໝໍເມືອງ ແລະ ຫົວໜ້າສຸກສາລາ ເມືອງ 05 ເມືອງ ເປົ້າໝາຍຂອງໂຄງການ RMNCH ທີ່ນັບຖື.**

**ເລື່ອງ ການຂຶ້ນບັນຊີ ແລະ ການຄຸ້ມຄອງ - ນຳໃຊ້ ອຸປະກອນການແພດ ທີ່ໄດ້ຮັບການສະໜັບສະໜູນຈາກໂຄງການ RMNCH ປີ 2023**

- ອີງຕາມ ຜົນຂອງກອງປະຊຸມ ຂອງຄະນະຄຸ້ມຄອງໂຄງການ ຄັ້ງວັນທີ 22 ສິງຫາ 2024
- ອີງຕາມ ລະບົບການຄຸ້ມຄອງ - ນຳໃຊ້ ອຸປະກອນການແພດຂອງໂຄງການ RMNCH ໃຫ້ເປັນລະບົບ

ເພື່ອເຮັດໃຫ້ການຄຸ້ມຄອງ ອຸປະກອນການແພດ ທີ່ໄດ້ຮັບການສະໜັບສະໜູນຈາກ ໂຄງການ *RMNCH* ໃຫ້ບັນດາໂຮງໝໍເມືອງ ແລະ ສຸກສາລາ ເປົ້າໝາຍ ໂຄງການ ໃນປີ 2023 ຜ່ານມາ ໃຫ້ເປັນລະບົບ, ສະດວກໃນການຕິດຕາມກວດກາ ແລະ ການຄຸ້ມຄອງ - ຊົມໃຊ້ ໃຫ້ເກີດຜົນປະໂຫຍດສູງສຸດສຳລັບຜູ້ມາຮັບບໍລິການ

ພະແນກສາທາລະນະສຸກແຂວງ ຂໍຖືເປັນກຽດຢ່າງສູງແຈ້ງການມາຍັງ ທ່ານ ຫົວໜ້າຫ້ອງການສາທາລະນະສຸກ, ອຳນວຍການໂຮງໝໍເມືອງ ແລະ ຫົວໜ້າສຸກສາລາ ເມືອງ 05 ເມືອງ ເປົ້າໝາຍຂອງໂຄງການ RMNCH (ເມືອງໄຊ, ງາ, ແບງ, ຮຸນ ແລະ ເມືອງປາກແບງ), ເພື່ອຮັບຊາບດັ່ງລຸ່ມນີ້:

1. ສຳລັບອຸປະກອນການແພດ ທີ່ໄດ້ສະໜອງຈາກໂຄງການ RMNCH ຕ້ອງມີລະບົບການຄຸ້ມຄອງທີ່ດີ, ຮັບປະກັນອຸປະກອນທີ່ສະໜອງໃຫ້ ຕ້ອງໄດ້ຖືກນຳໃຊ້ໃຫ້ເກີດຜົນປະໂຫຍດສູງສຸດແກ່ຜູ້ມາຮັບບໍລິການ ແລະ ອຸປະກອນຕ້ອງໄດ້ຂຶ້ນບັນຊີອຸປະກອນການແພດ ເຂົ້າເປັນສັບສິນຂອງລັດ, ມີລະບົບໃນການຄຸ້ມຄອງ-ຊົມໃຊ້ທີ່ດີ, ແຕ່ລະໂຮງໝໍ ແລະສຸກສາລາຕ້ອງໄດ້ລາຍງານສະພາບການການຊົມໃຊ້ອຸປະກອນທຸກໆ ໄຕມາດໃຫ້ ຄະນະອຳນວຍການໂຮງໝໍເມືອງ ແລະ ຂະແໜງປິ່ນປົວ ແລະ ຟື້ນຟູໜ້າທີ່ການ ແຂວງຮັບຊາບ ເປັນປົກກະຕິ
2. ຖ້າອຸປະກອນລາຍການໃດ ຜ່ານການນຳໃຊ້ຖ້າຫາກມີການເປ່ເພ ຕ້ອງໄດ້ຮັບການສ້ອມແປງທັນທີ ແລະ ຕ້ອງໄດ້ລາຍງານ ໃຫ້ໂຮງໝໍເມືອງ ດັ່ງກ່າວ ແລະ ຂະແໜງປິ່ນປົວ ແລະຟື້ນຟູໜ້າທີ່ການ ຮັບຊາບ ແລະ ອຸປະກອນໃດ ທີ່ເປ່ເພຂັ້ນເມືອງບໍ່ສາມາດສ້ອມແປງ ແມ່ນໃຫ້ສົ່ງອຸປະກອນທີ່ເປ່ເພດັ່ງກ່າວມາສ້ອມແປງ ຢູ່ ໂຮງຊ່າງສ້ອມແປງອຸປະກອນການແພດ ພາກເໜືອຢູ່ໂຮງໝໍແຂວງອຸດົມໄຊ, ເພື່ອໃຫ້ສາມາດນຳໃຊ້ຢ່າງເປັນປົກກະຕິ, ສ່ວນການໃຊ້ຈ່າຍໃນການສ້ອມແປງ ແມ່ນ ມອບໃຫ້ສະຖານທີ່ບໍລິການທີ່ສົ່ງອຸປະກອນມາສ້ອມແປງເປັນຜູ້ຮັບຜິດຊອບຈ່າຍ.
3. ຖ້າຫາກອຸປະກອນການແພດທີ່ໄດ້ຮັບການສະໜັບສະໜູນຈາກໂຄງການ ຖ້າສະຖານທີ່ບໍລິການໃດ ບໍ່ມີເງື່ອນໄຂຊົມໃຊ້, ຫຼື ອຸປະກອນສະໜອງໃຫ້ບໍ່ຖືກນຳໃຊ້ສະເໜີໃຫ້ ທ່ານຫົວໜ້າຫ້ອງການສາທາ ຫຼື ອຳນວຍການໂຮງໝໍເມືອງ ອອກຂໍ້ຕົກລົງ ຖອນອຸປະກອນລາຍການດັ່ງກ່າວນັ້ນຄືນ ໄປໃຫ້ໂຮງໝໍ ແລະ ສຸກສາລາ ບ່ອນທີ່ມີເງື່ອນໄຂ ແລະ ຄວາມຈຳເປັນພາຍໃນເມືອງນັ້ນນຳໃຊ້, ຖ້າເມືອງບໍ່ມີບ່ອນນຳໃຊ້ ຂັ້ນແຂວງຈະໄດ້ຖອນຄືນໄປໃຫ້ ເມືອງເປົ້າໝາຍຂອງໂຄງການ, ໃຫ້ໂຮງໝໍ ແລະ ສຸກສາລາເມືອງອື່ນທີ່ມີຄວາມຈຳເປັນໃນການຊົມໃຊ້ຕໍ່ໄປ

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຮັບຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດເນື້ອໃນແຈ້ງການນີ້ຢ່າງເຂັ້ມງວດ

**ຫົວໜ້າພະແນກ**

ທຸມພັນ ອິນທະມຸງຄຸນ

ໝາຍເຫດ: ປະສານງານຕິດຕໍ່

ທ່ານ ດຣ ຄຳຫຼ້າ ອານຸສອນ 020 22834123

Scanned with CamScanner

CamScanner